*Souphanouvong University Journal of Multidisciplinary Research and Development*
**2024,Vol. 8, No. 2, 135-141**
**https://doi.org/10.69692/SUJMRD0802135**

# The ability in pottery production of the pottery producer group of Ban Phakkhaya village, Atsaphone district, Savannakhet province

**Lidsada BANMANIVONG[1], Sitha KHEMMARATH[2], Thongsa TOUNMANYSONE[3], Vannasinh MANIVONG[3], Somphone VONGKEO[3], Soulang LATSAVAT[3], Soksay MONEPADITH[3]**
*Department of Transportation Management, Faculty of Engineering, Savannakhet University, Lao PDR*

[1]***Correspondence***:
*Lidsada BANMANIVONG, Department of Transportation Management, Faculty of Engineering, Savannakhet University,*
*Tel: +856 20 2268 5858*
*E-mail: LidQLKT1987@gmail.com*
[2]*Office of President*
[3]*Faculty of Business Administration, Savannakhet University*

***Article Info:***
*Submitted: Feb 17, 2022*
*Revised: Jun 02, 2022*
*Accepted: Jun 27, 2022*

## Abstract

study on the pottery production ability of the pottery producer group of Ban Phakkhaya village, Atsaphone district, Savannakhet province, with the objective: 1. Study on production process of the pottery producer group of Ban Phakkhaya village, Atsaphone district, Savannakhet province, 2. Study on the The ability in pottery production of the pottery producer group of Ban Phakkhaya village, Atsaphone district, Savannakhet province, the researchers use descriptive statistics to explain the process and ability of the samples with 3 heads of production group and collection data by open-ended questionnaire and observation. Findings from the study: There are 3 steps in the production process, such as the clay preparation process, the molding process, and the firing process. Equipment for production includes pin or hand wheel (phean), long-handled curved sword (ngao or hok), comb (Wi), a stick made from bamboo (Mai Tee Din), Krok or a square wooden (Mai Yieb Teen), design stick (Mai Lai), and string (Xerk). For the ability of pottery producers, each group made the same type and similar shape, using the same knowledge source from their ancestor, using only one kiln. The first group can produce 1.537 potteries, making revenue of about 18,720,000 kip per time. The second group can produce 1,675 potteries per time, making revenue of about 36,625,000 kip per time. The third group can produce 667 potteries, making revenue of about 10,180,000 kip per time. When calculated as the proportion per person in pottery production, the first group has the highest bility.

**Keyword:** *Ability, pottery, production process*

## 1. ພາກສະເໜີ

ວັດທະນະທຳປະເພນີທີ່ເກີດຈາກການແລກປ່ຽນຮຽນຮູ້ຈາກສິ່ງຕ່າງໆ ລ້ວນແຕ່ເປັນວັດທະນະທຳທາງພູມປັນຍາ ທີ່ໄດ້ສະສົມສືບຕໍ່ກັນມາ ແລະ ເປັນສິ່ງທີ່ສະທ້ອນໃຫ້ເຫັນເຖິງຄວາມຮູ້ ຄວາມຄິດຂອງບັນພະບຸລຸດທີ່ເກີດຈາກປະສົບການທີ່ໄດ້ຮັບການສືບທອດຈາກລຸ້ນໜຶ່ງໄປສູ່ອີກລຸ້ນໜຶ່ງ ລະຫວ່າງການສືບທອດມີການປັບປ່ຽນ ແລະ ປະຍຸກໃຊ້ເກີດເປັນແຫຼ່ງຄວາມຮູ້ໃໝ່ໆຕາມລັກສະນະທາງສັງຄົມ ແລະ ສິ່ງແວດລ້ອມທາງສັງຄົມ-ວັດທະນະທຳ ທາງພູມປັນຍາທີ່ມີຄວາມເປັນເອກະລັກສະເພາະຕົວທີ່ມີຄຸນຄ່າ ແລະ ເປັນເຄື່ອງໝາຍຂອງຄວາມເປັນຊົນຊາດນັ້ນໆດ້ວຍ

(ກິດຕະຍົດ ຄຳມີ່ງ, 2016), ມະນຸດຮູ້ຈັກໃຊ້ດິນເພື່ອປະໂຫຍດຂອງຕົນມາຕັ້ງແຕ່ຍຸກກ່ອນປະຫວັດສາດ ແລະ ພັດທະນາເປັນສິ່ງຂອງເຄື່ອງໃຊ້ໃນຊີວິດປະຈຳວັນເຊັ່ນ: ໝໍ້, ໄຫ, ຈານ, ຊາມ ໃຊ້ສ້າງທີ່ຢູ່ອາໄສ, ໃຊ້ເພື່ອປະໂຫຍດຕ່າງໆຫຼວງຫຼາຍຈົນເຖິງປະຈຸບັນ ຍັງມີການໃຊ້ດິນເພື່ອປະໂຫຍດໃຊ້ສອຍ ແຕ່ສິ່ງທີ່ແຕກຕ່າງຈາກອະດີດກໍ່ຄືໃນປະຈຸບັນເນັ້ນທີ່ຄວາມສວຍງາມ ແປກຕາຫຼາຍກວ່າປະໂຫຍດໃຊ້ສອຍ ເນື່ອງຈາກວິຖີຊີວິດທີ່ປ່ຽນໄປປະກອບກັບມີການນຳວັດສະດຸໃໝ່ມາໃຊ້ແທນເຊັ່ນ: ພລາສຕິກ, ສະແຕນເລດ ເປັນຕົ້ນ (ພິລະພົງ ພັນທະສີ, 2018)

ເຄື່ອງປັ້ນດິນເຜົາແມ່ນພາຊະນະທີ່ສ້າງຂຶ້ນມາແນ່ຮັບໃຊ້ເຂົ້າໃນຊີວິດປະຈຳວັນຂອງຄົນເຮົາ ມັນມີຄຸນຄ່າທາງການໃຊ້ສອຍ, ສາມາດສ້າງລາຍຮັບໃຫ້ແກ່ປະຊາຊົນຈາການຜະລິດ, ສາມາດສ້າງມູນຄ່າເພີ່ມຈາກການຄ້າຂາຍ, ໄດ້ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນ, ພ້ອມທັງສ້າງເປັນອຸປະກອນທີ່ເປັນເອກະລັກຂອງທ້ອງຖິ່ນ. ນອກຈາກນັ້ນ, ສຳລັບເຄື່ອງປັ້ນດິນເຜົາບູນຮານຍັງມີມູນຄ່າທາງດ້ານວັດທະນະທຳ ທີ່ເປັນດຶງດູດທາງດ້ານການທ່ອງທ່ຽວໃຫ້ກັບທ້ອງຖິ່ນໄດ້. ທີ່ສຳຄັນໄລຍະຜ່ານມາຍັງມີການສຶກສາກ່ຽວກັບເຄື່ອງປັ້ນດິນເຜົາຢູບ້ານຜັກຂະຫຍ່າຍັງມີໜ້ອຍ ແລະ ຄຳຕອບຍັງບໍ່ທັນຊັດເຈນ. ສະນັ້ນ, ພວກຂ້າພະເຈົ້າຈິ່ງມີຄວາມສົນໃຈຢາກສຶກສາເຖິງຄວາມສາມາດໃນການຜະລິດເຄື່ອງປັ້ນດິນເຜົາຂອງປະຊາຊົນບ້ານຜັກຂະຫຍ່າ ເມືອງອາດສະພອນ ແຂວງສະຫວັນນະເຂດ ມາສຶກສາໃນຄັ້ງນີ້.

## 2. ອຸປະກອນ ແລະ ວິທີການ

### 2.1 ພື້ນທີ່ການສຶກສາ

ພື້ນທີ່ການສຶກສາໃນຄັ້ງນີ້ແມ່ນບ້ານຜັກຂະຫຍ່າ, ເມືອງອາດສະພອນ, ແຂວງສະຫວັນນະເຂດ ເຊິ່ງການຜະລິດໄດ້ເຮັດການຜະລິດມາຕັ້ງແຕ່ບັນພະບູລຸດສືບທອດກັນມາຮອດປະຈຸບັນ ແລະ ໄດມີການຂຶ້ນທະບຽນເປັນສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນ (ກະຊວງອຸດສາຫະກຳ ແລະ ການຄ້າ, 2017)

### 2.2 ຮູບແບບການສຶກສາ

ການສຶກສາຄວາມສາມາດຂອງຜູ້ຜະລິດເຄື່ອງຫັດຖະກຳປັ້ນດິນເຜົາບ້ານຜັກຂະຫຍ່າ, ເມືອງອາດສະພອນ , ແແຂວງສະຫວັນນະເຂດ ໃນຄັ້ງນີ້ແມ່ນໄດ້ນາໃຊ້ວິທີການສຶກສາແບບຄຸນນະພາບ ແລະ ປະລິມານ ໂດຍການສຳຫຼວດ ແລະ ສຳພາດ ໂດຍໃຊ້ສະຖິຕິອ້າງອີງໃນການວິເຄາະຂໍ້ມູນ, ເຊິ່ງການເກັບກຳຂໍ້ມູນແມ່ນມີທັງຄຳຖາມປາຍປິດ ແລະ ປາຍເປີດ ໃນການສຳພາດຫົວໜ້າກຸ່ມຜູ້ຜະລິດເຄື່ອງຫັດຖະກຳປັ້ນດິນເຜົາ.

### 2.3 ການສ້າງແບບສອບຖາມ

ແບບສອບຖາມສຳລັບການສຶກສາຄັ້ງນີ້ແມ່ນອີງໃສ່ Prompongsaton (2015) ແລະ Kayamba and Kwesiga (2016). ຊຶ່ງແບບສອບຖາມປະກອບມີ 4 ພາກສ່ວນຄື: ພາກທີ 1: ຂໍ້ມູນທົ່ວໄປ, ພາກທີ 2: ຂັ້ນຕອນໃນການຜະລິດ, ພາກທີ 3: ຄວາມສາມາດໃນການຜະລິດ ແລະ ພາກທີ 4: ຂໍ້ສະເໜີອື່ນໆ.

### 2.4 ການກຳນົດຈຳນວນຕົວຢ່າງ

ໃນການລົງເກັບກຳຂໍ້ມູນປະຖົມພູມໃນການສຶກສາຄັ້ງນີ້ແມ່ນຈະໄດ້ກຳນົດຈຳນວນຕົວຢ່າງເພື່ອເປັນຕົວແທນໃຫ້ແກ່ກຸ່ມຜູ້ຜະລິດທີ່ຖືກສອບຖາມ ຊຶ່ງກຸ່ມຕົວຢ່າງທັງໝົດແມ່ນເອົາກຸ່ມຜູ້ຜະລິດທັງໝົດປະກອບມີ 3 ກຸ່ມຄື: ກຸ່ມຜະລິດທີ່ເຮືອນທ້າວຂຽນ ປະກອບມີທັງໝົດ 3 ຄອບຄົວ, ກຸ່ມຜະລິດທີ່ເຮືອນທ້າວຜາມີ ປະກອບມີ 3 ຄອບຄົວ ແລະ ກຸ່ມຜະລິດທີ່ເຮືອນທ້າວລ້ານ ປະກອບມີ 1 ຄອບຄົວ. ດັ່ງນັ້ນ, ກຸ່ມຕົວຢ່າງທັງໝົດທີ່ໃຊ້ໃນການສຶກສາແມ່ນປະກອບມີ 3 ກຸ່ມ ທີ່ເປັນຕົວແທນໃຫ້ຫົວໜ້າກຸ່ມການຜະລິດທັງໝົດ 7 ຄອບຄົວ.

### 2.5 ວິທີການເກັບກຳຂໍ້ມູນ

ໃນການສຶກສາຄັ້ງນີ້ ແມ່ນໄດ້ນຳໃຊ້ຂໍ້ມູນປະຖົມພູມ ຫຼື ຂໍ້ມູນມືໜຶ່ງ (Primary data) ໂດຍການລົງເກັບກຳຂໍ້ມູນດ້ວຍສັງເກດ ແລະ ການສອບຖາມຈາກຄອບຄົວປະຊາຊົນຜູ້ຜະລິດໃນ 3 ກຸ່ມທີ່ເຮັດການຜະລິດເຄື່ອງຫັດຖະກຳໃນບ້ານຜັກຂະຫຍ່າ ໂດຍແຕ່ລະກຸ່ມແມ່ນມີໂອກາດໃນການຖືກສຳພາດເທົ່າໆກັນ ໂດຍທາງທີມງານຄົ້ນຄ້ວາໄດ້ມີການເກັບລວບລວມຂໍ້ມູນລະອຽດຄື: ສຳພາດເອົາຫົວໜ້າກຸ່ມຂອງຜູ້ຜະລິດຂອງທັງໝົດ 3 ກຸ່ມເພື່ອເປັນຕົວແທນ.

### 2.6 ວິທີວິເຄາະຂໍ້ມູນ

ຂໍ້ມູນທີ່ໄດ້ຈາການລົງເກັບກຳຂໍ້ມູນນັ້ນ ການວິເຄາະຂໍ້ມູນທີ່ໄດ້ຈາກການສັງເກດການຕົວຈິງຂອງຂະບວນການຜະລິດແມ່ນຜ່ານການບັນທຶກ, ຈັດລຽງຂະບວນການແຕ່ລະຂະບວນການຕ່າງໆ ໃນການຜະລິດແລ້ວອະທິບາຍໂດຍການພັນລະນາ, ຂໍ້ມູນທີ່ໄດ້ຈາກການສຳພາດຈະເປັນຂໍ້ມູນກ່ຽວກັບຄວາມສາມາດໃນການຜະລິດແມ່ນວິເຄາະໂດຍ

ການຈັດຄ່າສ່ວນຮ້ອຍແລ້ວປຽບທຽບເພື່ອອະທິບາຍຄວາມສໍາຄັນໂດຍການອະທິບາຍຂະບວນການຕ່າງໆໃນການຜະລິດ ແລະ ການນໍາໃຊ້ເຄື່ອງມືເຂົ້າໃນການຜະລິດ.

## 3. ຜົນໄດ້ຮັບ

### 3.1 ສະພາບທົ່ວໄປຂອງກຸ່ມຕົວຢ່າງ

ຜົນຂອງການສຶກສາດ້ານສະພາບທົ່ວໄປຂອງຜູ້ຜະລິດເຄື່ອງປັ້ນດິນເຜົາ ບ້ານຜັກຂະຫຍ່າ ເມືອງອາດສະພອນ ພົບວ່າ ພາຍໃນບ້ານໄດ້ມີການຈັດຕັ້ງປະຕິບັດການຜະລິດເຄື່ອງປັ້ນດິນເຜົາໂດຍເຮັດເປັນກຸ່ມ, ທັງໝົດມີ 3 ກຸ່ມຄື: ກຸ່ມທີ 1 ແມ່ນກຸ່ມ ທ້າວ ລ້ານ, ກຸ່ມທີ 2 ແມ່ນກຸ່ມ ທ້າວ ພາມີ ແລະ ກຸ່ມທີ 3 ແມ່ນກຸ່ມ ທ້າວ ຂຽນ. ຜູ້ທີ່ທໍາການຜະລິດແມ່ນເປັນຜູ້ຊາຍ, ໃນໄວກາງຄົນ 48 ປີ ຂຶ້ນໄປ; ລະດັບການສຶກສາແມ່ນຈົບມັດທະຍົມຕອນປາຍລົງມາ ແລະ ປະສົບການທີ່ເຄີຍຜະລິດມາແມ່ນ 8 ປີຂຶ້ນໄປ. ເຫັນໄດ້ວ່າຜູ້ທີ່ທໍາການຜະລິດເຄື່ອງປັ້ນດິນເຜົາໃນບ້ານຜັກຂະຫຍ່າມີແຕ່ຜູ້ເປັນຫົວໜ້າຄອບຄົວ, ທີ່ເປັນໄວກາງຄົນແລ້ວ, ສ່ວນໄວໜຸ່ມສາວທີ່ບໍ່ແມ່ນລູກຫຼານຂອງຜູ້ຜະລິດແມ່ນບໍ່ມີສະແດງໃຫ້ເຫັນວ່າໄວໜຸ່ມສາວທີ່ຢູ່ພາຍໃນບ້ານບໍ່ມີຄວາມສົນໃຈ ຫຼື ບໍ່ມັກດ້ານການເຮັດເຄື່ອງປັ້ນດິນເຜົາ, (ດັ່ງລາຍລະອຽດຕາຕະລາງ 1).

### 3.2 ຂະບວນການໃນການຜະລິດ

#### 3.2.1 ຂັ້ນຕອນການໃນການຈັດກຽມດິນ

**1) ແຫຼ່ງທີ່ມາຂອງດິນ:** ດິນທີ່ໃຊ້ໃນການປັ້ນເຄື່ອງປັ້ນດິນເຜົາແມ່ນຕ້ອງເປັນດິນໜຽວສີແດງທີ່ໄດ້ຈາກບໍ່ດິນ ລວມຂອງບ້ານທີ່ສະຫງວນໄວ້ສະເພາະໃຫ້ປະຊາຊົນພາຍໃນບ້ານເພື່ອຮັບໃຊ້ເຂົ້າໃນການຜະລິດເຄື່ອງປັ້ນດິນເຜົາ.

**2) ການຕາກດິນ:** ພາຍຫຼັງນາດິນມາແລ້ວແມ່ນຈະມີບວນການໃນການຕາກໄວ້ໃນທີ່ແຈ້ງ (ເດີ່ນບ້ານ) ຫຼື ຕາກໄວ້ໃນທີ່ຮົ່ມ (ກ້ອງຕະລ່າງເຮືອນ) ເພື່ອເຮັດໃຫ້ດິນນັ້ນແຫ້ງໂດຍໃຊ້ໄລຍະເວລາປະມານ 3-7 ວັນ ຂຶ້ນກັບປະລິມານຄວາມຊຸ່ມຂອງດິນ.

**3) ການບົດ ຫຼື ຕໍາດິນ:** ຫຼັງຈາກດິນທີ່ໄດ້ມາແຫ້ງສົມບູນແລ້ວແມ່ນຈະເອົາໄປບົດ (ດ້ວຍການໃຊ້ເຄື່ອງຈັກ) ຫຼື ຕໍາໃສ່ຄົກ (ດ້ວຍແຮງງານຄົນ) ແລະ ຜ່ານຂະບວນການຮ່ອນເພື່ອໃຫ້ດິນທີ່ມຸ່ນລະອຽດ ຫຼື ກາຍເປັນຜົງຄືແປ້ງ.

**4) ການໝ່າດິນ (ປົ່ມດິນ):** ເມື່ອໄດ້ດິນທີ່ບົດ ຫຼື ຕໍາລະອຽດແລ້ວແມ່ນນໍາໄປໝ່າໃສ່ໄຫ, ດ້ວຍການຖອກນໍ້າໃສ່ໃຫ້ດິນປຽກຊຸ່ມພໍດີແລ້ວປະໄວ້ 1 ຄືນ ຫຼັງຈາກນັ້ນຈຶ່ງນໍາມານວດເພື່ອໃຫ້ດິນໜຽວເຂົ້າກັນເປັນກ້ອນທີ່ສາມາດປັ້ນໄດ້.

#### 3.2.2 ຂັ້ນຕອນການຜະລິດ ຫຼື ການປັ້ນ

**1) ປັ້ນກົ້ນ ຫຼື ຕີນ:** ເອົາດິນທີ່ນວດສໍາເລັດແລ້ວນັ້ນມາໃສ່ຂຽງໝູນຕີດິນໃຫ້ແບນໃຫ້ໄດ້ຂະໜາດຕາມຄວາມຕ້ອງການເພື່ອເຮັດກົ້ນຂອງສິ່ງທີ່ຈະປັ້ນ.

**2) ການຫຼອມດິນ:** ເອົາດິນທີ່ນວດສາເລັດນັ້ນມາຫຼອມໃດ້ດິນເປັນແທ່ງກົມ ມີຄວາມຍາວປະມານ 20 ຊັງຕີແມັດ ແລະ ໜ້າຕັດ ປະມານ 2 ຊັງຕີແມັດ.

**3) ການຂຶ້ນຮູບຊົງ:** ເອົາດິນທີ່ຫຼອມໄວ້ມາກໍ່ຕິດຕໍ່ກັນຂຶ້ນເປັນວົງມົນ ເພື່ອໃຫ້ໄດ້ຄວາມສູງຕາມລັກສະນະຂອງຜະລິດຕະພັນທີ່ຈະປັ້ນ.

**4) ການເກັບລາຍລະອຽດ:** ຫຼັງຈາກທີ່ຂຶ້ນຮູບຊົງໄດ້ຕາມຄວາມຕ້ອງການແລ້ວ ແມ່ນຈະດໍາເນີນການປັ້ນດ້ວຍການໃຊ້ເຄື່ອງມືປະເພດຕ່າງໆເພື່ອໃຫ້ໄດ້ຮູບຊົງຂອງຜະລິດຕະພັນຕ່າງໆຕາມຄວາມຕ້ອງການ.

**ສະຖານທີ່ ແລະ ເຄື່ອງມືທີ່ໃຊ້ໃນການຜະລິດ:** ບ້ານຜັກຂະຫຍ່າ ເປັນບ້ານໜຶ່ງທີ່ມີການຜະລິດເຄື່ອງປັ້ນດິນເຜົາມາຕັ້ງແຕ່ດົນນານ; ດ້ວຍການສືບທອດກັນມາຈາກລຸ້ນໜຶ່ງສູ່ອີກລຸ້ນໜຶ່ງ. ເຊິ່ງວ່າ, ເຄື່ອງມືທີ່ນໍາໃຊ້ໃນການຜະລິດເປັນອຸປະກອນທີ່ເຮັດຈາກໄມ້ ຫຼື ຊີມັງ ທີ່ເຮັດຂຶ້ນເອງຂອງແຕ່ລະຄອບຄົວ ແລະ ວັດຖຸທາໄດ້ຈາກພື້ນທີ່ໃນບ້ານ ແລະ ບໍລິເວນໃກ້ຄຽງ. ເຄື່ອງມືທີ່ປະຊາຊົນນໍາໃຊ້ໃນການຜະລິດເຄື່ອງປັ້ນດິນເຜົາປະກອບມີ: ຂຽງໝູນ (ເພີນ), ງ້າວ (ຫອກ ), ພ້າ, ຫວີ, ໄມ້ຕີດິນ, ໄມ້ຢຽບຕີນ ແລະ ໄມ້ສ້າງລວດ ລາຍ, ເຊືອກ ແລະ ໄມ້ຢຽບຕີນ ເປັນຕົ້ນ (ດັ່ງຮູບທີ 1).

#### 3.2.3 ຂັ້ນຕອນການເຜົາ

**1) ເຕົາເຜົາ:** ເຕົາທີ່ໃຊ້ໃນການເຜົາເຄື່ອງຫັດຖະກໍາປັ້ນດິນເຜົາບ້ານຜັກຂະຫຍ່ານີ້ແມ່ນເຕົາທີ່ຂຸດຢູ່ພື້ນດິນມີຄວາມເລິກປະມານ 2-3 ແມັດ, ມີຄວາມຍາວປະມານ 5-6 ແມັດ ແລະ ມີຄວາມກວ້າງ 2.5-3 ແມັດ (ຈະຂຸດຢູ່ແຄມຝັ່ງຫ້ວຍ).

**2) ຟືນ:** ພາຍຫຼັງກະກຽມເຕົາເຜົາສາເລັດແລ້ວແມ່ນການຈັດກຽມຟືນເພື່ອໃຊ້ໃນການເຜົາ ແລະ ຟືນທີ່ໃຊ້ຕ້ອງເປັນລັກສະນະໄມ້ເນື້ອແຂງເຊັ່ນ: ໄມ້ຈິກ, ໄມ້ຮັງ ...

**3) ການນຳຜະລິດຕະພັນເຂົ້າເຕົາເຜົາ:** ການຈັດລຽນເຄື່ອງປັ້ນດິນເຜົາເຂົ້າໃນເຕົາແມ່ນຈັດລຽນຈາກກົ້ນເຕົາຫາປາກເຕົາເຄື່ອງປັ້ນດິນເຜົາແຕ່ລະປະເພດຈະບໍ່ໃຫ້ຊ້ອນກັນ.

**4) ການເຜົາ:** ແມ່ນການຈູດໄຟໃນເຕົາເຜົາ, ເຊິ່ງໃຊ້

ເວລາທັງໝົດແມ່ນ 24 ຊົ່ວໂມງ ໂດຍການແຍກອອກເປັນ 12 ຊົ່ວໂມງທາອິດແມ່ນໄຟອ່ອນໆ ແລະ ດັງຢູ່ໄກ້ປາກເຕົາຫຼັງຈາກນັ້ນ ອີກ 12 ຊົ່ວໂມງແມ່ນດັງໄຟແຮງ ແລະ ດັງເຂົ້າໃນເຕົາເພື່ອໃຫ້ໄດ້ຄວາມຮ້ອນ, ເມື່ອຮອດເວລາ 24 ຊົ່ວໂມງແລ້ວຂັ້ນຕອນສຸດທ້າຍກ່ອນຢຸດດັງໄຟແມ່ນຕ້ອງຈູດໃບໄມ້ເໜືອດ ເພື່ອເຮັດໃຫ້ເຄື່ອງປັ້ນດິນເຜົາມີສີຂຽວ.

**5) ການປິດເຕົາເຜົາ:** ຫຼັງຈາກຈູດໃບໄມ້ເໜືອດໃຫ້ໝົດເປັນທີ່ຮຽບຮ້ອຍຖືວ່າປິດເຕົາ-ມອດໄຟ ແລະ ປະໄວ້ປະມານ 5-7 ວັນ ຈຶ່ງສາມາດເອົາອອກມາຈາໜ່າຍໄດ້.

### 3.3 ຄວາມສາມາດໃນການຜະລິດ

ຜົນຈາກການສຶກສາຄວາມສາມາດໃນການປັ້ນດິນເຜົາຂອງທັງສາມກຸ່ມເຫັນວ່າແຕ່ລະກຸ່ມໄດ້ທຳການຜະລິດເຄື່ອງປັ້ນດິນເຜົາປະເພດດຽວກັນ ແລະ ຮູບຊົງຂອງສິນຄ້າທີ່ຄ້າຍຄືກັນ ສະແດງໃຫ້ເຫັນວ່າທັງສາມກຸ່ມໄດ້ຮັບການຖ່າຍທອດຄວາມຮູ້ ແລະ ທັກສະໃນການປັ້ນຈາກພູມປັນຍາຂອງບັນພະບູລຸດອັນດຽວກັນ ແລະ ເຮັດວຽກຮ່ວມກັນແບບເຄືອຍາດສາຍພີ່ນ້ອງເຊິ່ງສະແດງອອກບ່ອນການນຳໃຊ້ເຄື່ອງມື, ນຳໃຊ້ເຕົາເຜົາ, ນຳໃຊ້ສະຖານທີ່ໃນການຜະລິດຮ່ວມກັນ ແຕ່ແຍກກຸ່ມການຜະລິດ ແລະ ແຕ່ລະກຸ່ມກໍ່ມີຄວາມສາມາດ ຫຼື ກຳລັງການຜະລິດແຕກຕ່າງກັນ, ມີການໃຊ້ແຮງງານບໍ່ເທົ່າກັນ ສະແດງອອກ ດັ່ງນີ້: ກຸ່ມທີ 1 ມີກຳລັງການຜະລິດພຽງ 2 ຄົນ ສາມາດຜະລິດເຄື່ອງປັ້ນດິນເຜົາໄດ້ 6 ປະເພດຄື: ຄົກ (ຈຳນວນ 500 ໜ່ວຍ), ໄຫປາແດກ (ຈຳນວນ 18 ໜ່ວຍ), ສະເອີງ (ຈຳນວນ 500 ໜ່ວຍ), ເຕົ້າດອກໄມ້ (ຈຳນວນ 4 ໜ່ວຍ), ໄຫເຫຼົ້າ (ຈຳນວນ 500 ໜ່ວຍ), ແອ່ງໜ່າເຂົ້າ (ຈຳນວນ 15 ໜ່ວຍ) ສິນຄ້າທີ່ສາມາດຜະລິດໄດ້ຫຼາຍ ແລະ ສ້າງລາຍເຂົ້າກຸ່ມຫຼາຍກວ່າໝູ່ແມ່ນ ການຜະລິດຄົກ ແລະ ໄຫເຫຼົ້າ ທັງສອງປະເພດສິນຄ້າລວມກັນສາມາດສ້າງລາຍຮັບສູງເຖິງ 15.000.000 ກີບ ຕໍ່ງວດ (ດັ່ງຕາຕະລາງທີ 2); ກຸ່ມທີ 2 ໃຊ້ເວລາໃນການຜະລິດ 18 ວັນ ນຳໃຊ້ແຮງງານທັງໝົດ 4 ຄົນ ສາມາດຜະລິດເຄື່ອງປັ້ນດິນເຜົາໄດ້ 7 ປະເພດຄື: ຄົກ (ຈຳນວນ 300 ໜ່ວຍ), ໄຫປາແດກ (ຈຳນວນ 100 ໜ່ວຍ), ສະເອີງ (ຈຳນວນ 750 ໜ່ວຍ), ເຕົ້າດອກໄມ້ (ຈານວນ 75 ໜ່ວຍ), ໄຫເຫຼົ້າ (ຈານວນ 300 ໜ່ວຍ), ແອ່ງໜ່າເຂົ້າ (ຈຳນວນ 100 ໜ່ວຍ), ກະອອມ (ຈຳນວນ 50 ໜ່ວຍ) ອັນພົ້ນເດັ່ນຂອງກຸ່ມທີ່ສາມາດຜະລິດ ແລະ ສ້າງລາຍຮັບຫຼາຍກວ່າໝູ່ແມ່ນການຜະລິດໄຫປາແດກ ຈຳນວນ 100 ໜ່ວຍສ້າງລາຍຮັບສູງເຖິງ 8,000,000 ກີບ (ດັ່ງຕາຕະລາງທີ 3); ກຸ່ມທີ 3 ໃຊ້ແຮງງານເຂົ້າໃນການຜະລິດ 5 ຄົນ ຈາກ 3 ຄອບຄົວ ສາມາດຜະລິດເຄື່ອງປັ້ນດິນເຜົາໄດ້ 8 ປະເພດ ຄື: ຄົກ (ຈຳນວນ 100 ໜ່ວຍ), ໄຫປາແດກ (ຈຳນວນ 10 ໜ່ວຍ), ສະເອີງ (ຈານວນ 150 ໜ່ວຍ), ເຕົ້າດອກໄມ້ (ຈຳນວນ 10 ໜ່ວຍ), ໄປເຫຼົ້າ (ຈຳນວນ 80 ໜ່ວຍ), ແອ່ງໜ່າເຂົ້າ (ຈຳນວນ 10 ໜ່ວຍ), ໄຫຊັ່ງປາ (ຈຳນວນ 7 ໜ່ວຍ), ດິນປ່ອງ (ຈຳນວນ 300 ໜ່ວຍ) ການຜະລິດອັນພົ້ນເດັ່ນທີ່ສາມາດຜະລິດ ແລະ ສ້າງລາຍຮັບເຂົ້າກຸ່ມຫຼາຍກວ່າໝູ່ແມ່ນດິນປ່ອງມີຈຳນວນ 300 ໜ່ວຍ ລວມເປັນເງິນສູງເຖິງ 6,000,000 ກີບຕໍ່ງວດ (ດັ່ງຕາຕະລາງທີ 4).

## 4. ວິພາກຜົນ

ຈາກການສຶກສາຂະບວນການ ແລະ ຄວາມສາມາດໃນການຜະລິດເຄື່ອງຫັດຖະກຳປັ້ນດິນເຜົາ ຂອງກຸ່ມຜູ້ຜະລິດເຄື່ອງຫັດຖະກຳປັ້ນດິນເຜົາ ບ້ານຜັກຂະຫຍ່າ ເມືອງອາດສະພອນ ແຂວງສະຫວັນນະເຂດ ເຫັນວ່າໃນດ້ານຂະບວນການຜະລິດແມ່ນປະກອບມີ 3 ຂັ້ນຕອນຄື: ຂັ້ນຕອນການໃນການຈັດກຽມດິນ, ຂັ້ນຕອນການຜະລິດ ຫຼື ການປັ້ນ ແລະ ຂັ້ນຕອນການເຜົາ ເຊິ່ງຜົນຂອງການສຶກສານີ້ແມ່ນສອດຄ່ອງກັບຜົນການສຶກສາຂອງ Prompongsaton (2015); Kayamba and Kwesiga (2016); M. S. TITE (2008) ໃນແຕ່ລະຕອນໃນການຜະລິດແມ່ນຍັງຮັກສາແບບດັ້ງເດີມ ທີ່ບໍ່ແມ່ນເປັນແບບອຸດສາຫະກຳນຳໃຊ້ເຄື່ອງຈັກທັງໝົດ ມີການປະກອບນຳໃຊ້ເຄື່ອງຈຳນວນໜຶ່ງຊ່ວຍແຕ່ກໍ່ຍັງໃຊ້ມືປະກອບກັນຢູ່ ໃນສ່ວນນີ້ກໍ່ສອດຄ່ອງກັບການສຶກສາຂອງ Kayamba and Kwesiga (2016).

ສຳລັບຄວາມສາມາດໃນການຜະລິດເຄື່ອງປັ້ນດິນເຜົາຂອງປະຊາຊົນແມ່ນສະແດງໃຫ້ເຫັນເຖິງການ

ຜະລິດໃນຮູບແບບດັ້ງເດີມສືບທອດມາແຕ່ບັນພະບູລຸດ, ການຜະລິດແມ່ນຈັດຕັ້ງເປັນກຸ່ມ ເຊິ່ງສາມາດຜະລິດໄດ້ຈໍານວນຫຼາຍພໍສົມຄວນສາມາດຕອບສະໜອງຄວາມຕ້ອງການຂອງຕະຫຼາດທ້ອງຖິ່ນໄດ້ຈໍານວນໜຶ່ງ, ຜະລິດຕະພັນສ່ວນໃຫຍ່ແມ່ນເຄື່ອງໃຊ້ຊີວິດປະຈໍາວັນ, ຜະລິດໄດ້ຫຼາຍຂະໜາດ ແລະ ຫຼາຍປະເພດຜະລິດຕະພັນຄື: ໃນລະຫວ່າງ 6-8 ປະເພດ ເຊິ່ງການສຶກສານີ້ແມ່ນສອດຄ່ອງກັບການສຶກສາຂອງ Miriam T. Stark (1991).

ນອກຈາກນີ້ຍັງສະແດງໃຫ້ເຫັນວ່າແຮງງານທີ່ຜະລິດແມ່ນກຸ່ມເພດຊາຍຜູ້ທີ່ມີອາຍຸສູງ (ຜູ້ເຖົ້າ) ຊຶ່ງການສຶກສານີ້ເຫັນວ່າມີຄວາມກົງກັນຂ້າມກັບການສຶກສາຂອງ Kayamba and Kwesiga (2016) ທີ່ເປັນກຸ່ມເພດຍິງເປັນຜູ້ຜະລິດ.

## 5. ສະຫຼຸບ

ຈາກຜົນການສຶກສາ ຂະບວນການໃນການຜະລິດແຍກອອກເປັນ 3 ຂັ້ນຕອນຄື: ຂັ້ນຕອງການກະກຽມດິນ, ຂັ້ນຕອນການຜະລິດ ຫຼື ການປັ້ນ ແລະ ຂະບວນການເຜົາ, ເຄື່ອງມືທີ່ໃຊ້ໃນການຜະລິດປະກອບມີ: ຂຽງໝູນ (ເພີນ), ງ້າວ (ຫອກ), ພ້າ, ຫວີ, ໄມ້ຕີດິນ, ໄມ້ຢຽບຕີນ ແລະ ໄມ້ສ້າງລວດລາຍ, ເຊືອກ ແລະ ໄມ້ຢຽບຕີນ.

ຄວາມສາມາດຂອງຜູ້ຜະລິດເຄື່ອງຫັດຖະກໍາປັ້ນດິນເຜົາບ້ານຜັກຂະຫຍ່າ, ເມືອງອາດສະພອນ, ແຂວງສະຫວັນນະເຂດພົບວ່າ: ແຕ່ລະກຸ່ມໄດ້ທໍາການຜະລິດເຄື່ອງຫັດຖະກໍາປັ້ນດິນເຜົາປະເພດດຽວກັນ ແລະ ຮູບຊົງຂອງສິນຄ້າທີ່ຄ້າຍຄືກັນ ນໍາໃຊ້ຄວາມຮູ້ມາຈາກແຫຼ່ງດຽວກັນຄືຈາກບັນພະບູລຸດ ມີການພົວພັນເຊິ່ງກັນ, ມີການໃຊ້ເຕົາໃນການເຜົາແຫຼ່ງດຽວກັນ. ຄວາມສາມາດໃນການຜະລິດແມ່ນກຸ່ມທີ 1 ມີຄວາມສາມາດໃນການຜະລິດໄດ້ທັງໝົດແມ່ນ 1.537 ໜ່ວຍຜະລິດຕະພັນ, ສາມາດສ້າງລາຍຮັບສູງເຖິງ 18,720,000 ກີບຕໍ່ງວດ, ກຸ່ມທີ 2 ມີຄວາມສາມາດໃນການຜະລິດທັງໝົດ 1.675 ໜ່ວຍຜະລິດຕະພັນ, ສາມາດສ້າງລາຍຮັບ 36,625,000 ກີບຕໍ່ງວດ, ກຸ່ມທີ 3 ມີຄວາມສາມາດໃນການຜະລິດທັງໝົດ 667 ໜ່ວຍຜະລິດຕະພັນ, ສາມາດສ້າງລາຍຮັບ 10,180,000 ກີບຕໍ່ງວດ ເມື່ອຄິດໄລ່ອັດຕາສ່ວນຕໍ່ຄົນໃນການຜະລິດແລ້ວເຫັນວ່າກຸ່ມຜູ້ຜະລິດທີ 1 ແມ່ນມີຄວາມສາມາດຫຼາຍທີ່ສຸດ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມນັກຄົ້ນຄວ້າວິທະຍາສາດຂໍປະຕິຍານຕົນວ່າຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດກັບພາກສ່ວນໃດໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ສະແດງຄວາມຂອບໃຈ

ການຄົ້ນຄ້ວາວິໄຈທາງວິຊາການນີ້ສໍາເລັດລົງໄດ້ແມ່ນຍ້ອນໄດ້ຮັບການສະໜັບສະໜຸນທຶນຈາກ ມະຫາວິທະຍາໄລສະຫວັນນະເຂດ ງົບປະມານຂອງລັດປີ 2019. ດັ່ງນັ້ນ, ທາງທີມງານຄົ້ນຄ້ວາວິໄຈ ຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈຢ່າງສູງມາຍັງ ມະຫາວິທະຍາໄລສະຫວັນນະເຂດ ທີ່ເຮັດໃຫ້ບົດຄົ້ນຄ້ວາວິໄຈນີ້ສໍາເລັດລົງໄປດ້ວຍດີ.

## 8. ເອກະສານອ້າງອີງ

ກະຊວງອຸດສາຫະກໍາ ແລະ ການຄ້າ. (2017). *ຂໍ້ຕົກລົງວ່າດ້ວຍສິນຄ້າ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ແຫ່ງຊາດ.* ນະຄອນຫຼວງວຽງຈັນ: ລັດຖະບານ

ກິດຕະຍົດ ຄໍາມິ່ງ. (2016). ການອະນຸລັດ, ຟື້ນຟູ, ອອກແບບ ແລະ ພັດທະນາເຄື່ອງປັ້ນດິນເຜົາເກາະເກັດ ຈັງຫວັດນົນທະບູລີ

ພິລະພົງ ພັນທະສີ. (2018). ເຄື່ອງປັ້ນດິນເຜົາສ້າງສັນ ກໍລະນີສຶກສາເຄື່ອງປັ້ນດິນເຜົາປະກອບໄມ້ຢາງພາລາ ໃນຈັງຫວັດສົງຂາ

Kallen, A. (2004). And Though Flows the River, Archaeology and the Pasts of Loa Pako. Appasala University. Sweden

Kayamba, W. and Kwesiga, P. (2016). The role of pottery production in development: A case study of the Ankole region in Western Uganda. *Net Journal of Social Sciences.* Vol. 4(4), pp. 81-90, ISSN: 2315-9774

MiriamT.Stark, (1991). Ceramic production and community specialization: A Kalinga ethnoarchaeological study. World Archaeology, Vol. 23, No. 1, pp. 64-78

M. S. TITE (2008). Ceramic production, provenance and use - A review. *Archaeometry* **50**, 2 (2008) 216–231. doi: 10.1111/j.1475-4754.2008.00391.x

Prompongsaton, N. (2015), Bank Kiln: Type and Process of Pottery in Southern Laos. Canadian Center of Science and Education. Vol. 11, No. 4; 348-364. ISSN 1911-2017

Thepsimuang, B. (2010). *History of Lao Nation I Settlement and the Establishment of the Kingdom*. Bangkok: Sukkapabjai Publisher.

ຕາຕະລາງ 1: ສະພາບທົ່ວໄປຂອງຜູ້ຜະລິດເຄື່ອງປັ້ນດິນເຜົາ ບ້ານຜັກກະຫຍ່າ

| ກຸ່ມ | ຊື່ | ອາຍຸ | ລະດັບການສຶກສາ | ຈຳນວນສະມາຊິກໃນຄອບຄົວ (ຄົນ) | ປະສົບການໃນການຜະລິດເຄື່ອງປັ້ນດິນເຜົາ | ເຫດຜົນທີ່ຜະລິດເຄື່ອງປັ້ນດິນເຜົາ |
|---|---|---|---|---|---|---|
| 1 | ທ. ລ້ານ | 48 | ມ.2 | 5 | 8 | ເປັນການສືບທອດ |
| 2 | ທ. ພານີ | 58 | ປ.5 | 8 | 30 | ຄວາມມັກ, ເປັນການສືບທອດ ແລະ ອື່ນໆ |
| 3 | ທ. ຂຽນ | 62 | ມ.6 | 5 | 52 | ຄວາມມັກ, ເປັນການສືບທອດ ແລະ ມີລາຍໄດ້ດີ |

ແຫຼ່ງຂໍ້ມູນ: ຈາກການສຳຫຼວດ (2019)

ຕາຕະລາງທີ 2: ຄວາມສາມາດໃນການຜະລິດເຄື່ອງປັ້ນຂອງກຸ່ມ 1

| ລ/ດ | ລາຍການຜະລິດ | ຈຳນວນ (ໜ່ວຍ) | ລາຄາ/ໜ່ວຍ (ກີບ) | ລວມເປັນເງິນ (ກີບ) | ແຮງງານທີ່ໃຊ້ຕໍ່ງວດ (ຄົນ) | ທີ່ມາຂອງແຮງງານ | ໄລຍະເວລາການຜະລິດຕໍ່ງວດ (ມື້) |
|---|---|---|---|---|---|---|---|
| 1 | ຄົກ | 500 | 15,000 | 7.500,000 | 2 | ຄົນໃນຄອບຄົວ | 17 |
| 2 | ໄຫປາແດກ | 18 | 30.000 | 540.000 | | | |
| 3 | ສະເອີງ | 500 | 5.000 | 2.500.000 | | | |
| 4 | ເຕົ້າດອກໄມ້ | 4 | 20.000 | 80.000 | | | |
| 5 | ໄຫເຫຼົ້າ | 500 | 15.000 | 7.500.000 | | | |
| 6 | ແອ່ງໝ່າເຂົ້າ | 15 | 40.000 | 600.000 | | | |
| 7 | ແນວຂັງປາ | 0 | 0 | 0 | | | |
| 8 | ກະອອມ | 0 | 0 | 0 | | | |
| 9 | ດິນປ່ອງ | 0 | 0 | 0 | | | |
| **ລວມ** | | **1.537** | | **18.720.000** | | | |

ແຫຼ່ງຂໍ້ມູນ: ຈາກການສຳຫຼວດ (2019)

ຕາຕະລາງທີ 3: ຄວາມສາມາດໃນການຜະລິດເຄື່ອງປັ້ນຂອງກຸ່ມ 2

| ລ/ດ | ລາຍການຜະລິດ | ຈຳນວນ (ໜ່ວຍ) | ລາຄາຕໍ່ໜ່ວຍ (ກີບ) | ລວມເປັນເງິນ (ກີບ) | ແຮງງານທີ່ໃຊ້ຕໍ່ງວດ (ຄົນ) | ທີ່ມາຂອງແຮງງານ | ໄລຍະເວລາການຜະລິດຕໍ່ງວດ (ມື້) |
|---|---|---|---|---|---|---|---|
| 1 | ຄົກ | 300 | 15.000 | 4.500.000 | 4 | ຮ່ວມກັບຄອບຄົວເພື່ອນບ້ານ (ມີ 3 ຄອບຄົວ) | 18 |
| 2 | ໄຫປາແດກ | 100 | 80.000 | 8.000.000 | | | |
| 3 | ສະເອີງ | 750 | 5.000 | 3.750.000 | | | |
| 4 | ເຕົ້າດອກໄມ້ | 75 | 15.000 | 1.125.000 | | | |
| 5 | ໄຫເຫຼົ້າ | 300 | 50.000 | 15,000,000 | | | |
| 6 | ແອ່ງໝ່າເຂົ້າ | 100 | 30.000 | 3.000.000 | | | |
| 7 | ແນວຂັງປາ | 0 | 0 | 0 | | | |

| | | | | | | | |
|---|---|---|---|---|---|---|---|
| 8 | ກະອອມ | 50 | 25.000 | 1.250.000 | | | |
| 9 | ດິນປ່ອງ | 0 | 0 | 0 | | | |
| **ລວມ** | | **1,675** | | **36,625,000** | | | |

ແຫຼ່ງຂໍ້ມູນ: ຈາກການສຳຫຼວດ (2019)

ຕາຕະລາງທີ 4: ຄວາມສາມາດໃນການຜະລິດເຄື່ອງປັ້ນຂອງກຸ່ມ 3

| ລ/ດ | ລາຍການຜະລິດ | ຈຳນວນ (ໜ່ວຍ) | ລາຄາຕໍ່ໜ່ວຍ (ກີບ) | ລວມເປັນເງິນ (ກີບ) | ແຮງງານທີ່ໃຊ້ຕໍ່ງວດ (ຄົນ) | ທີ່ມາຂອງແຮງງານ | ໄລຍະເວລາການຜະລິດຕໍ່ງວດ (ມື້) |
|---|---|---|---|---|---|---|---|
| 1 | ຄົກ | 100 | 15.000 | 1.500.000 | | | |
| 2 | ໄຫປາແດກ | 10 | 40.000 | 400.000 | | | |
| 3 | ສະເອີງ | 150 | 5.000 | 750.000 | | | |
| 4 | ເຕົ້າດອກໄມ້ | 10 | 15.000 | 150.000 | | | |
| 5 | ໄຫເຫຼົ້າ | 80 | 10.000 | 800.000 | 5 | ຮ່ວມກັບຄອບຄົວເພື່ອນບ້ານ (ມີ 3 ຄອບຄົວ) | 30 |
| 6 | ແອ່ງໜ່າເຂົ້າ | 10 | 30.000 | 300.000 | | | |
| 7 | ແນວຂັງປາ | 7 | 40.000 | 280.000 | | | |
| 8 | ກະອອມ | 0 | 0 | 0 | | | |
| 9 | ດິນປ່ອງ | 300 | 20.000 | 6.000.000 | | | |
| **ລວມ** | | **667** | | **10.180.000** | | | |

ແຫຼ່ງຂໍ້ມູນ: ຈາກການສຳຫຼວດ (2019)

ຮູບທີ 1: ເຄື່ອງມືທີ່ໃຊ້ເຂົ້າໃນການຜະລິດ



ແຫຼ່ງຂໍ້ມູນ: ຈາກການສຳຫຼວດ (2019)